**SD USD** San Diego Unified School District
*Fact Sheet*

# ມີຫລາຍໆຢ່າງທີ່ນາຍຄຣູສາມາດຢຸດຢັ້ງຄວາມຣຸນແຮງຢູ່ໃນໂຮງຮຽນ

ສະພາປ້ອງກັນການກະທຳຜິດກົດໝາຍຂອງຊາດຂໍໃຫ້ຊ່ອຍຢຸດຢັ້ງຄວາມຣຸນແຮງຢູ່ໃນໂຮງຮຽນ ໃນບັນຊີຄວາມຄິດເຫລົ່ານີ້. ບາງຢ່າງຕ້ອງໄດ້ກະທຳສ່ວນບຸກຄົນ; ບາງຢ່າງຕ້ອງໄດ້ປະຕິບັດຮ່ວມກັນ. ບາງຢ່າງເປັນເຣື່ອງຣິບດ່ວນກຽມພູ. ອີກອື່ນໆເປັນບັນຫາທີ່ສ້າງໃຫ້ເກີດຄວາມຣຸນແຮງ. ຂໍໃຫ້ພິຈາຣະນາເບິ່ງໃນຂໍ້ຕ່າງໆເຫລົ່ານີ້–ຍັງມີອີກຫລາຍໆຢ່າງທີ່ສາມາດນຳມາໃຊ້.

1. ລາຍງານຫາຫົວໜ້າໝວດໂຮງຮຽນທັນທີ ທີ່ມີສິ່ງໜ້າຢ້ານກົວທຸກຢ່າງ, ທີ່ມີພິລຸດ ຫລື ໄດ້ຍິນ ການສົນທະນາກັນກ່ຽວກັບອາວຸດ, ການກະທຳໃນທຳນອງແກ້ງອັຕພານ, ຫລື ມີສະພາບການທີ່ຈະກໍ່ໃຫ້ເກີດ ຫລື ຊຸກຍູ້ໃຫ້ເກີດມີຄວາມຣຸນແຮງ. ລາຍງານພຶດຕິການທີ່ຜິດປົກກະຕິ ແລະ ການກະທຳຜິດກົດໝາຍຕ່າງໆເຫລົ່ານີ້ຕໍ່ເຈົ້າໜ້າຮັບຜິດຊອບໄວເທົ່າທີ່ຈະໄວໄດ້.

2. ຕັ້ງກົດລະບຽບດ້ານການປະພຶດຢູ່ໃນຫ້ອງຮຽນຂອງທ່ານ. ບໍ່ອະນຸຍາດໃຫ້ມີຄວາມຣຸນແຮງເກີດຂຶ້ນ. ໃຫ້ພວກນັກຮຽນຊ່ວຍຈັດຕັ້ງວາງການລົງໂທດ ແລະ ນຳໃຊ້ກົດລະບຽບຢ່າງເຂັ້ມງວດ.

3. ເຊື້ອເຊີນພໍ່ແມ່ເຂົ້າມາໂອ້ລົມກ່ຽວກັບຄວາມກ້າວຂອງເດັກ ແລະ ສິ່ງທີ່ເປັນຫ່ວງຕ່າງໆທີ່ເຂົາເຈົ້າມີ. ສົ່ງໜັງສືໄປບ້ານເພື່ອສັນລະເສີນຄວາມສຳເຣັດຂອງເດັກ.

4. ຮຽນວິທີຮັບຮູ້ການສັນຍານພັຍ ທີ່ເດັກອາດຈະກະທຳຄວາມຣຸ້ນແຮງ ແລະ ຮູ້ວິທີຊອກເອົາການຊ່ວຍເຫລືອຂອງໂຮງຮຽນ ເພື່ອໄດ້ຄວາມຊ່ວຍເຫລືອທີ່ຖືກຕ້ອງເໝາະສົມ.

5. ຊຸກຍູ້ ແລະ ຊ່ວຍເຫລືອ ການນຳພາກິຈກັມທີ່ຕໍ່ຕ້ານ–ການຣຸນແຮງຂອງພວກນັກຮຽນ ແລະ ໂຄງການຕ່າງໆໃນກຸ່ມການສຶກສາ, ສານວັຍຣຸ້ນ, ແລະ ກຸ່ມໄກ່ເກ່ຍ ເພື່ອໃຫ້ການແນະນຳ ແລະ ການອົບຮົມ.

6. ສເນີໃຫ້ການບໍຣິການເປັນກຸ່ມ ຫລື ເປັນຄະນະເພື່ອກໍ່ສ້າງ ແລະ ປະຕິບັດແຜນຄວາມປອດພັຍຂອງໂຮງຮຽນ, ຮວມທັງວິທີການຂອງຄຣູແລະພະນັກງານໂຮງຮຽນອື່ນໆໂຕ້ຕອບເຫດການສຸກເສີນນັ້ນ.

7. ສົ່ງເສີມນະໂຍບາຍຕ່າງໆຂອງໂຮງຮຽນທີ່ຊອກຫາການຜ່ອນຜັນຄວາມຣຸນແຮງ. ໃຫ້ການຮັບຜິດຊອບທາງໃນ ແລະ ທາງນອກຫ້ອງຮຽນ.

8. ຈຳນຳບໍ່ໃຫ້ພວກນັກຮຽນດ່າວ່າກັນ, ເຍາະເຍີ້ຍກັນ ຫລື ກຸ່ມແກ້ງລົບກວນກັນ. ຊຸກຍູ້ໃຫ້ເຂົາເຈົ້າສະແດງຄວາມເຄົາຣົບຕໍ່ກັນແລະກັນ. ໃຫ້ເຂົາເຈົ້າເຂົ້າຮ່ວມການກໍ່ສ້າງຂັ້ນມາຕຖານດ້ານການປະພຶດທີ່ເໝາະສົມຈົບງາມ.

9. ເອົາໃຈໃສ່ສຶກສອນດ້ວຍຄວາມກະຕືລືລົ້ນ. ໃຫ້ນັກຮຽນເຮັດວຽກຢ່າງຫ້າວຫັນ, ຢ່າງໄດ້ຜົນ, ແລະ ໃຫ້ຣາງວັນຜູ້ທີ່ບໍ່ມັກສ້າງບັນຫາ.

10. ຮຽນຮູ້ ແລະ ສິດສອນຄວາມຮູ້ການແກ້ໄຂບັນຫາ ແລະ ການຄວບຄຸມຈິດໃຈ. ຊ່ອຍນັກຮຽນຝຶກແອບການໃຊ້ວິຊາເຫລົ່ານີ້ປະຈຳວັນ. ສົນທະນາກັບເຂົາເຈົ້າກ່ຽວກັບເນື້ອເຣື່ອງທີ່ສິດສອນ.

11. ສົນທະນາການຮ່ວມໄມ້ຮ່ວມມືກັນ ກ່ຽວກັບຄວາມຣຸນແຮງ ແລະ ການປ້ອງກັນໃນເຣື້ອງທີ່ສິດສອນໃນທຸກໆເວລາທີ່ສາມາດມີໄດ້.

12. ຊຸກຍູ້ໃຫ້ນັກຮຽນລາຍງານການກະທຳຜິດກົດໝາຍ ຫລື ກິຈກັມຕ່າງໆທີ່ຜິດປົກກະຕິຫລື ທີ່ທຳໃຫ້ເຂົາເຈົ້າບໍ່ສະບາຍໃຈ.

## ຂໍ້ສລູບ

- ❖ ລາຍງານພຶດຕິການຣຸນແຮງ ຫລື ສົງສັຍທຸກຢ່າງ ຫາຫົວໜ້າໝວດໂຮງຮຽນ ຫລື ເຈົ້າໜ້າທີ່ກ່ຽວຂ້ອງໂດຍທັນທີ
- ❖ ບໍ່ອະນຸຍາດໃຫ້ມີຄວາມຣຸນແຮງເກີດຂຶ້ນ.
- ❖ ເຊື້ອເຊີນພໍ່ແມ່ໂອ້ລົມກ່ຽວກັບຄວາມກ້າວໜ້າຂອງເດັກເຂົາເຈົ້າ.
- ❖ ຮຽນວິທີຮັບຮູ້ການສັນຍານເຫດການຄວາມຣຸນແຮງຂອງພວກນັກຮຽນ
- ❖ ຊຸກຍູ້ ແລະ ຊ່ວຍເຫລືອການນຳພາຂອງພວກນັກຮຽນ–ທີ່ຕໍ່ຕ້ານການກະທຳຣຸນແຮງ
- ❖ ເຂົ້າຮ່ວມໃນກຸ່ມກໍ່ສ້າງແຜນຄວາມປອດພັຍຂອງໂຮງຮຽນເພື່ອສອນພະນັກງານໃນວິທີໃຊ້ເວລາເກີດສຸກເສີນຕ່າງໆ
- ❖ ຮັບຜິດຊອບທາງໃນ ແລະ ເຂດນອກຫ້ອງຮຽນ
- ❖ ຊຸກຍູ້ໃຫ້ນັກຮຽນສະແດງຄວາມເຄົາຣົບຕໍ່ກັນ
- ❖ ເອົາໃຈໃສ່ສິດສອນດ້ວຍຄວາມກະຕືລືລົ້ນ
- ❖ ຮຽນຮູ້ ແລະ ສິດສອນວິຊາແກ້ໄຂບັນຫາ ແລະ ຄວາມຮູ້ກ່ຽວກັບການຄວບຄຸມຈິດໃຈ
- ❖ ຊຸກຍູ້ໃຫ້ມີການສົນທະນາກັນ ກ່ຽວກັບການປ້ອງກັນຄວາມຣຸນແຮງ
- ❖ ຊຸກຍູ້ໃຫ້ພວກນັກຮຽນລາຍງານທັນທີ ເມື່ອເຫັນການກະທຳຜິດກົດໝາຍ, ການປະພຶດທີ່ຣຸນແຮງ ຫລື ພຶດຕິການຕ່າງໆທີ່ຜິດປົກຕິ.

*ບົດຄວາມອັນນີ້ໃຫ້ມາ ແລະ ໃຫ້ອະນຸຍາດພິມໂດຍສະພາປ້ອງກັນພັຍຂອງຊາດ ©.*
*ລາຍລະອຽດເພີ້ມກ່ຽວກັບ ສະພາປ້ອງກັນພັຍຂອງຊາດນີ້ ຂໍໃຫ້ອ່ານໄດ້ທີ່* (www.ncpc.org).
*ລາຍລະອຽດເພີ້ມກ່ຽວກັບ ເຈົ້າໜ້າທີ່ຕຳຣວດບໍຣິການເມືອງແຊນດິເອໂກຂໍໃຫ້ອ່ານທີ່* *(http:prod031.sandi.net/policeservices/).*

ເພື່ອລາຍລະອຽດຕິດຕໍ່ຫາ: **Police Services Department: (619) 725-7000 Administration (619) 291-7678**

**www.sandi.net**